ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງເຕັກໂນໂລຊີ ແລະ ການສື່ສານ

ຫ້ອງການກະຊວງ

ເລກທີ2633/ຫກ.6

ນະຄອນຫຼວງວຽງຈັນ, ວັນທີ 16 ຕຸລາ 2023

## ໜັງສືແຈ້ງເຊີນປະມູນ

1. ກະຊວງເຕັກໂນໂລຊີ ແລະ ການສື່ສານ ໂດຍຕາງໜ້າຫ້ອງການກະຊວງ ຊຶ່ງໄດ້ຮັບອະນຸມັດງົບປະມານ ລົງທຶນຂອງລັດ ປະຈຳປີ 2023: ໂຄງການຂະຫຍາຍລະບົບຄລາວ (Cloud) ຮອງຮັບການຫັນເປັນທັນສະໄໝ ຂໍເຊີນບັນດາບໍລິສັດທີ່ສົນໃຈ ແລະ ມີຄຸນນະວຸທິເໝາະສົມ ທີ່ດຳເນີນກິດຈະການດ້ານອຸປະກອນລະບົບເຄືອຂ່າຍ, ອຸປະກອນຄວາມປອດໄພ, ອຸປະກອນແມ່ຂ່າຍ, ອຸປະກອນຈັດເກັບຂໍ້ມູນ ເພື່ອຕິດຕັ້ງຂະຫຍາຍລະບົບຄລາວ ທີ່ ສູນອິນເຕີເນັດແຫ່ງຊາດ ເຂົ້າຮ່ວມປະມູນ. ກຳນົດມອບຮັບສິນຄ້າ 21 ວັນ ພາຍຫຼັງເຈົ້າຂອງໂຄງການອອກເອກະສານສັ່ງຊື້;
2. ການປະມູນ ຈະດຳເນີນຕາມຂັ້ນຕອນການປະມູນເປີດກວ້າງ ທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
3. ການປະມູນນີ້ ອະນຸຍາດໃຫ້ທຸກໆບໍລິສັດທີ່ມີຄຸນນະວຸດທິເໝາະສົມ, ມີໃບອະນຸຍາດດຳເນີນທຸລະກິດຖືກຕ້ອງຕາມກົດໝາຍທີ່ກ່ຽວພັນກັບການສະໜອງອຸປະກອນລະບົບເຄືອຂ່າຍ, ອຸປະກອນຄວາມປອດໄພ, ອຸປະກອນແມ່ຂ່າຍ, ອຸປະກອນຈັດເກັບຂໍ້ມູນ ເພື່ອຕິດຕັ້ງຂະຫຍາຍລະບົບຄລາວ;
4. ບໍລິສັດໃດ ທີ່ຕ້ອງການຊື້ເອກະສານປະມູນຄົບຊຸດເປັນພາສາລາວ ໄດ້ທີ່ ພະແນກສັງລວມ, ຊັ້ນ 1 ສູນອິນເຕີເນັດແຫ່ງຊາດ, ກະຊວງເຕັກໂນໂລຊີ ແລະ ການສື່ສານ, ບ້ານ: ສາຍລົມ, ເມືອງ: ຈັນທະບູລີ, ນະຄອນຫລວງວຽງຈັນ, ເບີໂທຕິດຕໍ່: 021 254150, 020 22993232 ເລີ່ມຂາຍຊອງແຕ່ວັນທີ 17 ຕຸລາ 2023 ເຖິງວັນທີ 07 ພະຈິກ 2023 (ໃນໂມງລັດຖະການ), ໃນລາຄາ 4,000,000 ກີບຕໍ່ຊອງ, ຈຳນວນເງິນດັ່ງກ່າວນີ້ຈະບໍ່ໄດ້ມີການສົ່ງຄືນ ແລະ ວິທີການຊຳລະຕ້ອງຈ່າຍເປັນເງິນສົດ;
5. ຊອງປະມູນຕ້ອງສົ່ງກ່ອນເວລາ 09:00 ໂມງ ຂອງວັນທີ 08 ພະຈິກ 2023 ທີ່ຫ້ອງການກະຊວງ ຕສ, ຫ້ອງປະຊຸມຊັ້ນ 02 ຕຶກກະຊວງ ຕສ, ສີສະເກດ. ຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກຳນົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນໂດຍບໍ່ມີການເປີດຊອງ. ຊອງປະມູນທຸກໆຊອງຈະໄດ້ເປີດໃນເວລາ 09:00 ໂມງ ຂອງ ວັນທີ 08 ພະຈິກ 2023 ໂດຍຊ້ອງໜ້າຄະນະກຳມະການການປະມູນ ແລະ ຕົວແທນຂອງຜູ້ປະມູນ;
6. ທຸກໆຊອງປະມູນຕ້ອງປະກອບການຄ້ຳປະກັນການປະມູນ ດ້ວຍເງິນສົດ, ໜັງສືຄ້ຳປະກັນອອກໂດຍທະນາຄານ, ເຊັກ (ວີຊາ) ບໍ່ໃຫ້ຫຼຸດ 2% ຂອງມູນຄ່າທີ່ສະເໜີ;

ຫົວໜ້າຫ້ອງການ

ກະຊວງເຕັກໂນໂລຊີ ແລະ ການສື່ສານ
ຫ້ອງການ

ອະລະໄຊ ດາລາລອຍ